**III-.ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ (ເຕົ້າໂຮມສອງກະຊວງເຂົ້າກັນ)**

ພັກ ແລະ ລັດຖະບານໄດ້ຕົກລົງປັບປຸງການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງປະເທດຊາດໃນໄລຍະໃໝ່ ໂດຍໄດ້ເຕົ້າໂຮມ ກະຊວງຂົນສົ່ງໄປສະນີ ແລະ ກະຊວງກໍ່ສ້າງ ເຂົ້າເປັນກະຊວງດຽວ ເອີ້ນວ່າ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ຕາມດຳລັດເລກທີ 66/ນຍ ລົງວັນທີ 20 ພຶດສະພາ 1989 ວ່າດ້ວຍການຈັດຕັ້ງແລະເຄື່ອນໄຫວຂອງ ກະ ຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງແມ່ນການຈັດຕັ້ງຄຸ້ມຄອງລັດຂັ້ນສູນກາງໃນກົງຈັກຂອງລັດຖະບານ, ມີພາລະບົດບາດໃນການວາງແຜນ, ກໍ່ສ້າງ ແລະ ຄຸ້ມຄອງມະຫາພາກດ້ານວຽກງານທາງບົກ, ທາງນໍ້າ, ທາງອາກາດ, ການຂົນສົ່ງ, ການສື່ສານ, ການເຄຫາ ແລະ ການຜັງເມືອງ ນັບທັງຕົວເມືອງ ແລະ ຊົນນະບົດໃນຂອບເຂດທົ່ວປະເທດ. ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ ແລະ ຂອບເຂດໃນການຄຸ້ມຄອງບໍລິຫານລັດຕາມກົດໝາຍແຫ່ງ ສປປ ລາວ.

ພາຍຫລັງທີ່ໄດ້ເຕົ້າໂຮມສອງກະຊວງໃຫ້ເປັນກະຊວງເຕັກນິກວິຊາການດຽວ ຊຶ່ງມີວຽກງານພົວ ພັນຊຶ່ງກັນ ແລະ ກັນ, ທ່ານບົວທອງ ວົງລໍຄໍາ ລັດຖະມົນຕີວ່າການກະຊວງ ຄຂປກ ຈຶ່ງສະເໜີຕໍ່ສູນກາງພັກ ຈັດກອງປະຊຸມຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ທົ່ວປະເທດຄັ້ງທີ I ແຕ່ວັນທີ 11-15 ກຸມພາ 1991 ຊຶ່ງເປັນກອງປະຊຸມຄັ້ງປະຫວັດສາດຂອງຂະແໜງການ ຄຂປກ.

ຕະຫລອດໄລຍະ 15 ປີ (1975-1991) ກະຊວງ ຄຂປກ ຍາດໄດ້ຜົນງານທີ່ໜ້າຊື່ນຊົມໃນຫລາຍດ້ານພາຍໄຕ້ແສງສະຫວ່າງແຫ່ງມະຕິຂອງພັກ, ດ້ວຍຄວາມບາກບັ່ນພະຍາຍາມຂອງຂະແໜງການຢູ່ສູນກາງແລະທ້ອງຖິ່ນ, ດ້ວຍການປະກອບສ່ວນອັນໃຫຍ່ຫລວງຂອງປະຊາຊົນ ແລະການຮ່ວມມື ຊ່ວຍເຫລືອຈາກບັນດາປະເທດສັງຄົມນິຍົມອ້າຍນ້ອງ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຊຶ່ງມີລາຍລະອຽດດັ່ງນີ້:

- **ດ້ານຄົມມະນາຄົມ :**

1)- ໄດ້ສ້າງທາງສາຍຂວາງອອກສູ່ທະເລເບື້ອງຕາເວັນອອກ ທັບມ້າງວົງປິດລ້ອມຂອງທຶນນິຍົມ, ຮັບປະກັນຄວາມເປັນເອກະລາດແລະຄວາມເປັນເຈົ້າຕົນເອງ; ສາມາດກໍ່ສ້າງ ແລະ ຟື້ນຟູທາງໄດ້ 2 615 ກມ ສ້າງຂົວໄດ້ 667 ແຫ່ງ ໃນນັ້ນມີຂົວໃຫຍ່ 16 ແຫ່ງ ເຮັດໃຫ້ມີເສັ້ນທາງລົດໄປເຖິງ 16ແຂວງແລະ 103 ເມືອງໃນທົ່ວປະເທດລວມລວງຍາວຂອງທາງງ ມີ 13 971 ກມ (ເພີ່ມຂຶ້ນ 23% ທຽບໃສ່ 1975).

2)-ໄດ້ນຳໃຊ້ທຸກຄວາມອາດສາມາດຂອງການຂົນສົ່ງທາງນໍ້າໂດຍໄດ້ສຳຫລວດເສັ້ນທາງເດີນເຮືອ, ຕ້ານຕະຝັ່ງເຈື່ອນ, ການກໍ່ສ້າງ ແລະ ສ້ອມແປງທ່າເຮືອໄດ້ 5 ແຫ່ງ.

ວຽກງານຂົນສົ່ງ:ໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງແຂງແຮງທັງພາກສ່ວນຂອງລັດແລະເອກະຊົນເພີ່ມຂຶ້ນເປັນ 10 ເທົ່າຕົວ ເຮັດໃຫ້ບໍລິມາດຂົນສົ່ງສິນຄ້າເພີ່ມຂຶ້ນ 5 ເທື່ອ ແລະ ຂົນສົ່ງໂດຍສານເພີ່ມຂຶ້ນ 6 ເທື່ອ.ລວມບໍລິມາດຂົນສົ່ງສິນຄ້າທັງໝົດ ໄດ້ 8 725 240 ໂຕນ ໃນນີ້ ທາງບົກໄດ້ກວມເອົາ

# ໂຄງຮ່າງການຈັດຕັ້ງຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ (1989-2006)

ທ່ານ ອຸດົມ ຂັດຕິຍະ
**ລັດຖະມົນຕີວ່າການ**
(1988-1989)

ທ່ານ ບົວທອງ ວົງລໍຄໍາ
**ລັດຖະມົນຕີວ່າການ**
(2002-2006)

ທ່ານ ເພົ້າ ບຸນນະຜົນ
**ລັດຖະມົນຕີວ່າການ**
(1995-2002)

ທ່ານ ບົວສີ ລໍວັນໄຊ
**ຮອງລັດຖະມົນຕີວ່າການ**
(1988-1993)

ທ່ານ ເຊີນ ເພັດສັງຫານ
**ຮອງລັດຖະມົນຕີວ່າການ**
(1988-1998)

ທ່ານ ນ້ອຍ ອິນດາວົງ
**ຮອງລັດຖະມົນຕີວ່າການ**
(1988-1993)

ທ່ານ ທົງສະຫວາດ ປະເສີດ
**ຮອງລັດຖະມົນຕີວ່າການ**
(1988-1992)

ທ່ານ ທິມມະກອນ ມະໂນທັມ
**ຮອງລັດຖະມົນຕີວ່າການ**
(1991-1995)

ທ່ານ ຄໍາລວດ ສິດລາກອນ
**ຮອງລັດຖະມົນຕີວ່າການ**
(1993-2006)

ທ່ານ ຄໍາຫຼ້າ ລໍລອນສີ
**ລັດຖະມົນຕີຊ່ວຍວ່າການ**
(1998-2004)

ທ່ານ ໄຊ ພະກະຊຸມ
**ລັດຖະມົນຕີຊ່ວຍວ່າການ**
(1998-2003)

**ຫ້ອງການ**
ທ່ານ ສີທອງບົວພາ(1989-90)
ທ່ານ ສະໝອນວົມະນີ(1991-92)
ທ່ານ ໄຊ ພະກະຊຸມ (1993-2003)
ທ່ານ ມັດ ສູນມາລາ (1998-04)
ທ່ານ ສຈ.ດຣ ບຸນເຫຼື້ອມ ສີສຸລາດ
(2004-2006)

**ກົມຈັດຕັ້ງ**
ທ່ານ ຄໍາຫຼ້າ ລໍລອນສີ
(1989-04)
ທ່ານ ສີພຸກ ວົງພັກດີ
(2002-2006)

**ກົມຄົມມະນາຄົມ**
ທ່ານ ບົວໄລ ສຸກອາລຸນ
ທ່ານ ມັດ ສູນມາລາ(93-95)
ທ່ານ ສົມມາດ ພົລເສນາ
(1995-2004)

**ກົມຂົນສົ່ງ**
ທ່ານ ຄໍາຫຼ້າ ວິສີສົມ (89-93)
ທ່ານ ບຸນໂຮມ ພົມສະຫວັນ
(1993-1997)
ທ່ານ ຂັນເງິນ ຄໍາວົງສາ (98-99)
ທ່ານ ລັດຕະນະມະນີ ຄູນນິວົງ(99-02)

**ກົມການບິນ**
ທ່ານ ແຖ່ງ ພ້ອຍພານິດ
ທ່ານ ສະດາເພັດ ໂພທິວັນ
(1989-94)
ທ່ານ ຢາກົວ ລໍປາງກາວ

**ກົມການເງິນ**
ທ່ານ ບົວສະຫວັນ ສີຫານາດ
(1999-2004)

**ກົມເຄຫາ-ຜັງເມືອງ**
ທ່ານ ສົມພອນ ເດດອຸດົມ
(1992-96)
ທ່ານ ບຸນເຫຼື້ອມ ສີສຸລາດ
(1996-2004)

**ກົມໄປສະນີ**
ທ່ານ ກ້າຢາ ປາລີ (1993-98)
ທ່ານ ສຸລິຂັນ ຫຼວງເສນາ(1998-2001)
ທ່ານ ປາລະມີ ພົມມະທັນສີ
(2001-2007)

**ຄະນະພັດທະນາຊົນນະບົດ**
ທ່ານ ບຸນໂຮມ ພົມສະຫວັນ
(1998-

**ອົງການນໍ້າປະປາ**
ທ່ານ ສົມພອນ ເດດອຸດົມ
(2000-2003)

**ຄະນະກໍາມະການກວດກາ**
ທ່ານ ແຂວງລິດ ໂຄດໂຍທາ
(1999-2001),(2002-06)

**ຄະນະພັດທະນາທາງລົດໄຟ**
ທ່ານ ຄໍາແສງ ໄຊຍະກອນ
(1995-2001)

**ສະຖາບັນຄົ້ນຄວ້າຜັງເມືອງ**
ທ່ານ ແກ້ວພິລາວັນ ອາໄພລາດ(2002-2006)
ທ່ານ ແທ່ນຄໍາ ທອງບັນ

92.5% ແລະ ທາງນ້ຳ 6.7% ແລະ ບໍລິມາດຂົນສົ່ງໂດຍສານທັງໝົດໄດ້ 114 850 000 ຄົນ ໃນນີ້ ທາງບົກໄດ້ ກວມເອົາ 95.3% ແລະ ທາງນ້ຳ 3.7%.

- **ດ້ານການກໍ່ສ້າງເຄຫາສະຖານ ແລະ ຜັງເມືອງ**

ລັດ ແລະ ປະຊາຊົນໄດ້ພ້ອມກັນປະກອບສ່ວນບູລະນະສ້າງສາບ້ານເມືອງທີ່ຖືກທຳລາຍໃຫ້ໄດ້ຮັບການກໍ່ສ້າງ ຄືນໃໝ່ (ຊຳເໜືອ, ໂພນສະຫວັນ, ອຸດົມໄຊ....) ແລະໄດ້ກໍ່ສ້າງສຳນັກງານອົງການ, ພື້ນ ຖານວັດຖຸເຕັກນິກໃຫ້ແກ່ ຂະແໜງການອື່ນໆຢ່າງກວ້າງຂວາງເປັນຕົ້ນແມ່ນການແກ້ໄຂທີ່ພັກອາໃສ, ກໍ່ ສ້າງໂຮງຮຽນ ໂຮງໝໍຕະລາດ, ຮ້ານ ຄ້າ, ໂຮງງານ ແລະ ອື່ນໆ ໂດຍໄດ້ກໍ່ສ້າງສຳເລັດຫລາຍຮ້ອຍໂຄງການທັງໃນຕົວເມືອງແລະຊົນນະບົດ ໃນນັ້ນ ກໍ ມີໂຄງການໃຫຍ່ທີ່ມີຄວາມໝາຍທາງດ້ານເສດຖະ ກິດ ວັດທະນະທຳ-ສັງຄົມເປັນຕົ້ນ ໂຮງໝໍມິດຕະພາບລາວ-ໂຊ ວຽດ (150 ຕຽງ), ໂຮງຮຽນສັບພະວິຊາຊັ້ນກາງ(ໂສກປ່າຫລວງ), ໂຮງຮຽນທິດສະດີຊັ້ນສູງ (ທ່າງ່ອນ), ຫໍປະຊຸມ ຫລັກ 6, ກາຍະສິນ, ນ້ຳປະປານະຄອນຫລວງ ແລະ ສະຫວັນນະເຂດ. ພວກເຮົາຍັງໄດ້ຄົ້ນຄວ້າອອກ ແບບ ຜັງເມືອງໃໝ່ຈຳນວນໜຶ່ງ, ຄຸ້ມຄອງການປຸກສ້າງ ແລະ ປະກອບສິ່ງອຳນວຍຄວາມສະດວກຕ່າງໆ (ໄຟຟ້າ, ນ້ຳ ປະປາ ແລະ ນ້ຳສະອາດ, ໂທລະສັບ.....) ພິເສດແມ່ນເຮັດໃຫ້ນະຄອນຫລວງມີໃບໜ້າໃໝ່.

ນອກຈາກນີ້ ພວກເຮົາກໍຍັງໄດ້ຄົ້ນຄວ້າ ແລະ ຜະລິດວັດສະດຸກໍ່ສ້າງພາຍໃນ ເພື່ອຫລຸດຜ່ອນ ການນຳເຂົ້າ ຈາກຕ່າງປະເທດ ເປັນຕົ້ນ ໄມ້ແປຮູບ, ໄມ້ປາກເກ, ດິນຈີ່, ແຮ່ຊາຍ, ຫີນອ່ອນ, ປູນ, ນ້ຳ ສີ, ກະເບື້ອງມຸງ, ສັງກະສີ, ຕະປູ ແລະ ອື່ນໆ.

- **ດ້ານໄປສະນີ ແລະ ໂທລະຄົມມະນາຄົມ**

ວຽກງານໄປສະນີ ແລະ ໂທລະຄົມມະນາຄົມ ໄດ້ຮັບການຟື້ນຟູ ແລະ ການຂະຫຍາຍຕົວ ແນ ໃສ່ຕອບສະ ໜອງຄວາມຮຽກຮ້ອງຕ້ອງການດ້ານການສື່ສານຂອງລັດ ແລະ ປະຊາຊົນ ຊຶ່ງພໍສະຫລຸບໄດ້ດັ່ງນີ້ :

- ທົ່ວປະເທດ ມີຫ້ອງການໄປສະນີທັງໝົດ 121 ແຫ່ງ, ໜ່ວຍໂທລະເລກ 110 ແຫ່ງ, ສູນໂທລະສັບ 68 ແຫ່ງ ແລະ ຈ່າມໄປສະນີ 90 ແຫ່ງ ຊຶ່ງ ໄດ້ເຮັດໃຫ້ ໄປສະນີພັນພາຍ ໃນເພີ່ມຂຶ້ນ 2.1ເທື່ອ, ໄປ ຕ່າງປະເທດເພີ່ມຂຶ້ນ 5.53 ເທື່ອ
- ມີລະບົບໂທລະຄົມທັນສະໄໝສາມາດຕິດຕໍ່ກັບທຸກໆແຂວງໄດ້ຢ່າງທັນການ ແລະ ຊັດເຈນ, ໄດ້ກໍ່ສ້າງ ສະຖານີດາວທຽມພາກພື້ນດິນຂຶ້ນເປັນປະຫວັດການ 2 ແຫ່ງ ສາມາດຕິດຕໍ່ກັບຫລາຍປະເທດໃນໂລກ ໄດ້ຢ່າງຊັດເຈນ ແລະ ວ່ອງໄວ ແລະ ສາມາດຮັບສັນຍານໂທລະ ພາບຜ່ານດາວທຽມຈາກສະຫະພາບ ໂຊວຽດ ຊຶ່ງ ໄດ້ເຮັດໃຫ້ ການຕິດຕໍ່ໂທລະສັບພາຍ ໃນເພີ່ມຂຶ້ນ 3.5 ເທື່ອ ແລະ ຕ່າງປະເທດເພີ່ມຂຶ້ນ 5.53 ເທື່ອ.

ນອກຈາກນີ້ ກໍໄດ້ປັບປຸງການບໍລິການ, ການສົ່ງເມໃຫ້ວ່ອງໄວ ແລະ ຮັບປະກັນຂຶ້ນຕື່ມ ເປີດບໍລິການເມ ດ່ວນ (E.M.S) ໄປຫາບັນດາແຂວງໃຫຍ່ ແລະ ຫລາຍປະເທດໃນໂລກທີ່ມີການພົວພັນກັບ ສປປ ລາວ.

- **ດ້ານການຄຸ້ມຄອງເສດຖະກິດ**

ພວກເຮົາໄດ້ຈັດຕັ້ງຄະນະຮັບຜິດຊອບທັນໄປສູ່ກົນໄກໃໝ່ຂັ້ນ ກະຊວງໂດຍໄດ້ດຳເນີນການທັນ

ຮາກຖານການຜະລິດຕ່າງໆຂອງລັດໄປສູ່ການໄລ່ລຽງເສດຖະກິດຢ່າງຂາດຕົວ ເປັນເຈົ້າຕົນເອງ ທາງ ດ້ານການເງິນ ເຮັດການຜະລິດມີຜົນກຳໄລ ມີການມອບເໝົາ ມີການຜູກພັນສັນຍາ ເອົາຕະລາດເປັນ ຈຸດເລີ້ມຂອງແຜນການປະຕິບັດຫລັກການພົວພັນສິນຄ້າ-ເງິນຕາ ແລະ ປະກອບພັນທະໃຫ້ລັດຢ່າງຕັ້ງ ໜ້າ. ຢູ່ຂັ້ນກະຊວງ ມີ 50 ຫົວໜ່ວຍຮາກຖານໄດ້ຫັນໄປສູ່ການຜະລິດທຸລະກິດທັງໝົດ ໂດຍມີ 8 ຫົວໜ່ວຍແຂງ ມີຜົນກຳໄລ, 27 ຫົວໜ່ວຍລະດັບປານກາງ ແລະ ສ່ວນເຫລືອ ຍັງຫລຸບທຶນ.

- **ວຽກງານຈັດຕັ້ງແລະກໍ່ສ້າງພະນັກງານ**

ດ້ວຍແນວທາງປ່ຽນແປງໃໝ່ຂອງພັກ, ກົງຈັກຂອງລັດໃນຂົງເຂດຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງແມ່ນໄດ້ປັບປຸງຄືນໃໝ່ໃຫ້ກະທັດລັດ ແຍກສອງພາລະບົດບາດ ຄຸ້ມຄອງລັດ ແລະ ຄຸ້ມຄອງທຸລະກິດ ຢ່າງຈະແຈ້ງ. ໃນກົງຈັກບໍລິຫານຂອງ 2 ກະຊວງລວມກັນ ມີ 400 ກວ່າຄົນ ແລະ 40 ກົມ; ພາຍຫລັງການສັບຊ້ອນ ແລະ ປັບປຸງ ຈຳນວນພົນໄດ້ຫລຸດລົງຍັງເຫລືອ ແຕ່ 130 ຄົນແລະ ມີ 10 ກົມ.

ໃນ 15 ປີຜ່ານມາ ພວກເຮົາສ້າງພະນັກງານໄດ້ດັ່ງນີ້:

- ເໜືອຊັ້ນສູງ 5 ຄົນ
- ຊັ້ນສູງ ແລະ ທຽບເທົ່າຊັ້ນສູງ 1 173 ຄົນ (ສ້າງພາຍໃນໄດ້ 1 029 ຄົນ)
- ຊັ້ນກາງ 2 461 ຄົນ (ສ້າງພາຍໃນໄດ້ 1 599 ຄົນ)
- ຊັ້ນຕົ້ນ 7 520 ຄົນ (ສ້າງພາຍໃນໄດ້ 5 640 ຄົນ)

**III.1- ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ (ແຕ່ 1991-2007)**

ພາຍຫລັງທີ່ໄດ້ເຕົ້າໂຮມສອງກະຊວງເຂົ້າກັນໃນ 1991 ເອີ້ນວ່າກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງດັ່ງກ່າວນີ້ໄດ້ເຮັດພາລະບົດບາດໜ້າທີ່ຂອງຕົນຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ ຊຶ່ງໄດ້ເຮັດໃຫ້ມີຜົນງານອັນພົ້ນເດັ່ນ ຈຶ່ງຂໍຍົກບາງຕົວເລກ ກໍຄື ຜົນງານທີ່ຍາດມາໄດ້ໃນຊ່ວງໄລຍະນີ້ ຊຶ່ງເປັນເຫດຜົນໜຶ່ງຂອງການແຍກອອກເປັນສອງກະຊວງ ເພື່ອເຮັດໃຫ້ຂະແໜງການໂຍທາທິການແລະຂົນສົ່ງ, ຂະໜງການໄປສະນີແລະໂທລະຄົມມະນາຄົມ ມີທ່ວງທ່າໃໝ່ໃນການກ້າວຂຶ້ນ.

ອົງຄະນະພັກຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງໄດ້ມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ປະກອບດ້ວຍ 13 ຮາກຖານພັກ ມີຄະນະພັກກະຊວງ 2 ສະຫາຍ ແລະ ສະມາຊິກທັງໝົດ 375 ສະຫາຍ ໃນນັ້ນ ເພດຍິງມີ 66 ສະຫາຍ.

ຄະນະພັກກະຊວງ ຄຂປກ ໄດ້ເອົາໃຈໃສ່ວຽກງານສຶກສາອົບຮົມນຳພາແນວຄິດ ການເມືອງດ້ວຍ ຫລາຍຮູບຫລາຍສີ ທັງທາງເລິກ ແລະ ທາງກວ້າງ ເຮັດໃຫ້ສະມາຊິກພັກ, ພະນັກງານ ແລະ ລັດຖະກອນ ມີຄວາມສາມັກຄີເປັນປຶກແຜ່ນ ເປັນກຳລັງແຮງໃນການປະຕິບັດໜ້າທີ່ການເມືອງຂອງຕົນ ດ້ວຍ ຜົນງານ ແລະ ໄຊຊະນະທີ່ຍາດມາໄດ້ດ້ວຍຜົນສຳເລັດທີ່ຈົບງາມ ໂດຍສະເພາະ ແມ່ນການ ຈັດຕັ້ງປະຕິບັດທິດທາງໜ້າທີ່ ກອງປະຊຸມໃຫຍ່ຄັ້ງທີ I ຂອງອົງຄະນະພັກກະຊວງ ຍທຂ ແລະ ຈິດໃຈເນື້ອໃນມະຕິຂອງກອງປະຊຸມໃຫຍ່ຄັ້ງທີ VII, VIII ແລະ IX ຂອງພັກປະຊາຊົນປະຕິວັດລາວ.

ກົງຈັກການຈັດຕັ້ງຂັ້ນຕ່າງໆຂອງກະຊວງໄດ້ປັບປຸງໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະໄປຄຽງຄູ່ກັບການກຳນົດຕຳແໜ່ງງານແລະກຳນົດມາດຕະຖານພະນັກງານຕັ້ງແຕ່ຂັ້ນຮອງກົມລົງເຖິງ

ຫ້ອງການ ຍທຂ ເມືອງ. ກະຊວງ ຄຂປກ ໄດ້ສຸມໃສ່ປັບປຸງການຈັດຕັ້ງຂອງຕົນໂດຍໄດ້ແຍກວຽກງານໄປສະນີ ແລະ ໂທລະຄົມມະນາຄົມ ໄປໃຫ້ອົງການໄປສະນີ ແລະ ໂທລະຄົມມະນາຄົມຮັບຜິດຊອບຕາມມະຕິຕົກລົງຂອງ ຄະນະປະຈຳສະພາແຫ່ງຊາດ ໂດຍໄດ້ປ່ຽນຊື່ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມາເປັນ ກະຊວງໂຍທາທິການ ແລະ ຂົນສົ່ງ. ມາຮອດ ແຕ່ປີ 1989 ຫາ 2007 ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ທີ່ພັກ ແລະ ລັດໄດ້ຂະໜານນາມວ່າ ເປັນຂະແໜງປາຍແຫລມຂອງເສດຖະກິດແຫ່ງຊາດ ໄດ້ມີ ຜົນງານອັນໃຫຍ່ຫລວງໃນຫລາຍດ້ານເຮັດໃຫ້ການຄົມມະນາຄົມ ຂົນສົ່ງ ແລະ ການສື່ສານຊຶ່ງເປັນສາຍເລືອດຂອງ ປະເທດຊາດ ໄດ້ທະລຸລົ່ງ ແລະ ເຊື່ອມຈອດກັບທຸກຂົງເຂດທີ່ສຳຄັນຂອງທົ່ວປະເທດ ປະກອບສ່ວນອັນໃຫຍ່ຫລວງ ແກ່ການພັດທະນາເສດຖະກິດ-ສັງຄົມ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການລົບລ້າງຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າໄດ້ຢ່າງຈະແຈ້ງ ກໍຄືການນຳພາປະເທດ ຊາດຫລຸດພົ້ນອອກຈາກຄວາມດ້ອຍພັດທະນາໃນ ປີ 2020.

ມາຮອດປີ 2007 ຜົນງານຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ພໍສະ ຫລຸບຢ່າງ ສັງລວມໃນແຕ່ດ້ານດັ່ງນີ້:

- **ວຽກງານພັກ, ຈັດຕັ້ງ ແລະ ພະນັກງານ**

ປັດຈຸບັນ ກໍໄດ້ສຳເລັດການປັບປຸງພາລະບົດ ບາດ, ສິດ ແລະ ໜ້າທີ່ ແລະ ໂຄງປະກອບການ ຈັດຕັ້ງຂອງ ກະຊວງ ແລ້ວກໍຍັງສືບຕໍ່ປັບປຸງພາລະບົດບາດຂັ້ນກົມ ແລະ ຂັ້ນພະແນກຄືນໃໝ່.

ກະຊວງ ຍທຂ ຍັງໄດ້ປັບປຸງແບບແຜນວິທີເຮັດວຽກໃຫ້ມີຄວາມຄ່ອງຕົວດີຂຶ້ນບົນພື້ນຖານຫລັກການລວມ ສູນປະຊາທິປະໄຕ ແລະ ໄດ້ຫັນທິດໄປສູ່ການຄຸ້ມຄອງມະຫາພາກຕາມຂະແໜງການໂດຍໄດ້ກຳນົດມາດຕະການ ແບ່ງຂັ້ນຄຸ້ມຄອງລະຫວ່າງກົມຂອງກະຊວງກັບພະແນກ ຍທຂ ແຂວງ ນະຄອນຫລວງ.

ກະຊວງ ຍທຂ ຍັງໄດ້ເອົາໃຈໃສ່ປະຕິບັດຄຳສັ່ງຂອງກົມການເມືອງກ່ຽວກັບການຫັນພະນັກງານລົງຊ່ວຍ ທ້ອງຖິ່ນໃນການກໍ່ສ້າງຮາກຖານການເມືອງຕາມ 4 ເນື້ອໃນ 4 ຄາດໝາຍ ດ້ວຍການຊອກ ທຶນຮອນມາກໍ່ສ້າງເສັ້ນທາງໄປຫາບ້ານ, ກຸ່ມບ້ານພັດທະນາ, ສ້າງຜັງເມືອງ ແລະ ນ້ຳປະປາ ແນໃສ່ສ້າງກຸ່ມບ້ານ ໃຫ້ກາຍເປັນຕົວເມືອງນ້ອຍ.

ໃນຊຸມປີຜ່ານມາ ຫົວໜ່ວຍທຸລະກິດ ຂອງຂະແໜງ ຍທຂ ທັງຂອງລັດ ແລະ ເອກະຊົນໄດ້ເຕີບໃຫຍ່ເຂັ້ມແຂງ ແລະ ເຄື່ອນໄຫວຢ່າງມີປະສິດທິຜົນ ຊຶ່ງມີບາງບໍລິສັດກໍໄດ້ຮັບໃບຢັ້ງຢືນຈາກອົງການມາດຕະຖານສາກົນ.

- **ການປະຕິບັດໜ້າທີ່ທາງດ້ານວິຊາສະເພາະ**

ກະຊວງ ຍທຂ ໄດ້ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VII ແລະ VIIIຂອງພັກກໍຄື ແຜນການ 5 ປີຄັ້ງທີ 6 ຂອງລັດ ຊຶ່ງມີ 11 ແຜນງານ ແລະ 111 ໂຄງການຂອງລັດຖະບານ ໂດຍ ສະເພາະ ແມ່ນແຜນ ງານທີ 8 ທີ່ກ່ຽວຂ້ອງໂດຍກົງກັບຂະແໜງການ ຍທຂ ປະກອບດ້ວຍ 9ໂຄງການ ໃຫຍ່ ແລະ 71 ໂຄງການ ລະອຽດ ຕ້ອງການທຶນທັງໝົດ 14.092 ຕື້ກີບ ໃນນີ້ຊອກທຶນໄດ້ແລ້ວ 50% ແລະ ກຳລັງຂົນຂວາຍຊອກທຶນຕື່ມ ອີກ 50%.

- **ດ້ານຄົມມະນາຄົມ**

1- **ເສັ້ນທາງບົກ**: ເສັ້ນທາງບົກທັງສາຍຕັ້ງ ແລະ ສາຍຂວາງ ແມ່ນໄດ້ຮັບກໍ່ສ້າງ ແລະ ຟື້ນຟູໃຫ້ມີຄຸນນະພາບດີ ໂດຍໄດ້ເຮັດໃຫ້ເສັ້ນທາງບົກໄປເຖິງແຕ່ເໜືອຮອດໄຕ້ ແຕ່ຕາເວັນອອກຫາຕາເວັນ ຕົກ ທັງສາມາດເຊື່ອມຕໍ່ກັບປະເທດໄກ້ຄຽງ ແລະ ຍັງເລິກເຂົ້າເຖິງຮາກຖານຊົນນະບົດ, ເຂດພູດອຍຫ່າງໄກສອກຫລີກ ແລະ ເຂດຈຸດສຸມຫລາຍແຫ່ງ. ເສັ້ນທາງຫລວງແຫ່ງຊາດທີ່ເປັນເສັ້ນທາງອະນຸພາກພື້ນ (ເລກ 13, 8, 9, 2, 18 ແລະ 12) ກໍໄດ້ຖືກຍົກລະດັບດ້ວຍການປູຢາງຕາມມາດຕະຖານຊັ້ນ 3 ສຳເລັດ 1 016 ກມ. ເສັ້ນທາງຫລວງແຫ່ງຊາດທີ່ບໍ່ແມ່ນທາງອະນຸພາກພື້ນກໍໄດ້ປູຢາງຕາມມາດຕະຖານຊັ້ນ 4 ສຳເລັດ 1 131 ກມ. ຮອດປີ 2007 ຕາໜ່າງເສັ້ນທາງທົ່ວປະເທດມີລວງຍາວທັງໝົດ 37 322 ກມ ທຽບໃສ່ປີ 2000 ເພີ່ມຂື້ນ 58% ແລ້ວກໍຍັງໄດ້ກໍ່ສ້າງຂົວຂະໜາດກາງແລະໃຫຍ່ ຈຳນວນ 40 ແຫ່ງໃນນັ້ນ ກໍມີຂົວນ້ຳຂອງແຫ່ງທີ 2 ແລະ ມິດຕະພາບນ້ຳເທືອງລາວ-ໄທ.

2-ເສັ້ນທາງນ້ຳ: ພວກເຮົາໄດ້ປັບປຸງຄອງເດີນເຮືອຕາມລຳແມ່ນ້ຳຂອງຕອນເໜືອລະຫວ່າງ 4 ປະເທດ ລວງຍາວ 310 ມ ໄດ້ຮັບຜົນສຳເລັດ ເພື່ອຮອງຮັບເຮືອຂະໜາດ 150 ຫາ 300 ໂຕນ. ການປ້ອງກັນຕ້ານຕະຝັ່ງເຈື່ອນໄດ້ຮັບການກໍ່ສ້າງດ້ວຍຜົນສຳເລັດ ມີລວງຍາວ 3 540ມ ແລະໄດ້ກໍ່ສ້າງທ່າເຮືອໃໝ່ອີກ 2 ແຫ່ງ.

3-ທາງລົດໄຟ: ພວກເຮົາສາມາດຍາດແຍ່ງການຊ່ວຍເຫລືອສຳລັບກໍ່ສ້າງທາງລົດໄຟ ລວງຍາວ 3.50 ກມ ຊຶ່ງໄດ້ກໍ່ສ້າງສຳເລັດໃນເດືອນ 4/2008.

- **ດ້ານການຂົນສົ່ງ**

  - **ຂົນສົ່ງທາງບົກ ແລະ ທາງນ້ຳ**

ກະຊວງໄດ້ປັບປຸງແລະສ້າງນິຕິກຳ ກ່ຽວກັບວຽກງານຂົນສົ່ງທາງບົກ, ທາງນ້ຳເພື່ອເຮັດໃຫ້ການຄຸ້ມຄອງມີປະສິດທິຜົນດີກວ່າເກົ່າ ໂດຍໄດ້ສ້າງຕັ້ງສະມາຄົມ ແລະ ອອກໂຄງສ້າງຄ່າໂດຍສານຊຶ່ງເຮັດໃຫ້ຄ່າຂົນສົ່ງໂດຍສານທາງບົກ-ທາງນ້ຳ ແລະ ຄ່າຂົນສົ່ງໂດຍສານ ມີຄວາມເໝາະສົມ ແລະ ເປັນທຳແກ່ສອງຝ່າຍ.

ພວກເຮົາໄດ້ ຂະຫຍາຍ ສາຍທາງຂົນສົ່ງໂດຍສານພາຍໃນແລະຜ່ານແດນກັບບັນດາປະເທດໄກ້ຄຽງດັ່ງນີ້: 1)- ໄດ້ເພີ່ມອີກ 2 ສາຍທາງໃໝ່ ຈາກ 18 ສາຍທາງ ລວມມີ 20 ສາຍທາງ ກັບ ສສ ຫວຽດນາມ 2)- ໄດ້ເພີ່ມອີກ 2 ສາຍທາງໃໝ່ ຈາກ 7 ສາຍທາງ ລວມມີ 9 ສາຍທາງກັບສປຈີນ; 3)-ມີສາຍທາງຂົນສົ່ງໂດຍສານຢ່າງເປັນປະຈຳກັບປະເທດໄທ ໂດຍໄດ້ເພີ່ມຈາກ 4ຖ້ຽວຂື້ນເປັນ 6ຖ້ຽວຕໍ່ວັນສຳລັບສາຍທາງວຽງຈັນ ຫາ ໜອງຄາຍ-ອຸດອນ.

ສັນຍາຂົນສົ່ງອະນຸພາກພື້ນ GMS ໄດ້ຮັບການຈັດຕັ້ງປະຕິບັດທົດລອງຈຸດດຽວຢູ່ດ່ານແດນສະຫວັນ-ລາວບາວ ແນໃສ່ຂະຫຍາຍໄປສູ່ດ່ານສາກົນອື່ນໆ ແລ້ວກໍຍັງໄດ້ສຳຫລວດຄວາມເປັນໄປໄດ້ໃນການກໍ່ສ້າງສາງຄຸ່ນຖ່າຍສິນຄ້າຊາຍແດນ (ICD/Inland Container Depot ) ຢູ່ນະຄອນຫລວງວຽງຈັນແລະສະຫວັນນະເຂດ. ອັນພົ້ນເດ່ນແມ່ນໄດ້ລົບລ້າງການຜູກຂາດຂອງຜູ້ດຳເນີນການຂົນສົ່ງສິນຄ້າຂອງໄທຈາກ 5 ບໍລິສັດໃນເມື່ອກ່ອນ ມາເປັນການເປີດເສລີ ດ້ານການຂົນສົ່ງ ເຮັດໃຫ້ລາຄາຂົນສົ່ງຖືກລົງເຖິງ 20-30%.

ກ່ຽວກັບການຈະລາຈອນ, ໄດ້ສ້າງຕັ້ງຄະນະກຳມະການຄວາມປອດທາງຖະໜົນຂື້ນ ໂດຍໄດ້ດຳເນີນຫລາຍຮູບການ, ວິທີການຕາມແຜນຍຸດທະສາດແລະແຜນດຳເນີນງານຄວາມປອດໄພທາງຖະໜົນ ເຮັດໃຫ້ສະພາບການຈະລາຈອນຕາມທ້ອງຖະໜົນ ມີຄວາມເປັນລະບຽບລຽບລ້ອຍແລະມີຄວາມປອດໄພດີກວ່າເກົ່າ ເຮັດໃຫ້ຕົວເລກ

ສະຖິຕິຄົນເສຍຊີວິດຈາກອຸປະຕິເຫດຫລຸດລົງຈາກ 21 ຄົນ ຕໍ່ລົດ10000 ຄັນ (2001) ມາເປັນ 8 ຄົນ ຕໍ່ລົດ 10 000 ຄັນໃນປີ 2007.

ກະຊວງ ຍທຂ ໄດ້ປັບປຸງດ້ານການຄຸ້ມຄອງພາຫະນະດ້ວຍການປັບປຸງລະບົບຂຶ້ນ ແລະ ນຳໃຊ້ທະບຽນພາຫະນະທັນສະໄໝດ້ວຍໂປຣແກຣມ ສາມາດຄວບຄຸມແບບລວມສູນໃນທົ່ວປະເທດ.ນອກຈາກນີ້ ກໍໄດ້ສົ່ງເສີມການສ້າງຕັ້ງສູນກວດກາເຕັກນິກແບບທັນສະໄໝຢູ່ບັນດາແຂວງຈາກ 1ແຫ່ງ (2001) ເພີ່ມຂຶ້ນເປັນ 9 ແຫ່ງ (2007). ພວກເຮົາໄດ້ຈັດຕັ້ງຄວບຄຸມນ້ຳໜັກລົດບັນທຸກແຕ່ປີ 2000ເປັນຕົ້ນມາ ໄດ້ເຮັດໃຫ້ລົດບັນທຸກນ້ຳໜັກເກີນ ຕາມຖະໜົນຫລຸດຈາກ 91% (2000) ລົງເປັນ16% (2007) ສາມາດປະຢັດງົບປະມານໃນການສ້ອມແປງທາງໄດ້ຫລາຍຕື້ກີບ.

ການຂົນສົ່ງທາງອາກາດ ສະໜາມບິນວັດໄຕ, ຫລວງພະບາງ, ປາກເຊ ລວມທັງສະໜາມບິນອື່ນໆ ໄດ້ຖືກປັບປຸງແລະຍົກລະດັບຂຶ້ນ ໂດຍສະເພາະແມ່ນສະໜາມບິນວັດໄຕສາມາດຮອງຮັບຍົນໂບອິງ 747 ໄດ້. ການບັນຊາຄວບຄຸມແລະຄຸ້ມຄອງການບິນຜ່ານນ່ານຟ້າຂອງສປປລາວ ກໍໄດ້ຖືກຍົກລະດັບຂຶ້ນໃຫ້ເປັນສູນຂ່າວສານການບິນວຽງຈັນເປັນສູນບັນຊາການບິນແຫ່ງຊາດ. ສະຖິຕິຍົນບິນຜ່ານແລະຂຶ້ນລົງສະເລັ່ຍແລ້ວເພີ່ມຂຶ້ນ 9%-10%ຕໍ່ປີ ເຮັດໃຫ້ລາຍຮັບເພີ່ມຂຶ້ນຢ່າງຕໍ່ເນື່ອງ ສະເລັ່ຍ 9% ຕໍ່ປີ ສາມາດສ້າງລາຍຮັບໄດ້ປະມານ 28.5 ລ້ານໂດລາໃນປີ 2007 ລື່ນແຜນການ 7.4 ລ້ານໂດລາ.

- **ດ້ານໄປສະນີ-ໂທລະຄົມມະນາຄົມ**

ດ້ານໄປສະນີ ມີຫ້ອງການໄປສະນີ 109 ແຫ່ງ ຈ່າມໄປສະນີ 106 ແຫ່ງ ແລະ ສາຂາຈຳໜ່າຍສະແຕມ 111ແຫ່ງ ດ້ວຍການບໍລິການເມດ່ວນ, ໄປສະນີພັນ ແລະ ໄດ້ຂະຫຍາຍການບໍລິການເງິນຝາກຈາກສະຖາບັນເງິນຝາກປະຢັດ ໂດຍໄດ້ຂະຫຍາຍລົງໄປ 17 ແຂວງ.

ດ້ານໂທລະຄົມມະນາຄົມ ໄດ້ຂະຫຍາຍຈາກ 1 ບໍລິສັດ (2001) ມາເປັນ 5 ບໍລິສັດ (2007) ເຮັດໃຫ້ມີຜູ້ຊົມໃຊ້ໂທລະສັບທັງໝົດ 1 331 712 ເລກໝາຍ ສະເລັ່ຍແລ້ວເທົ່າກັບ 23 ໜ່ວຍ ຕໍ່ປະ ຊາກອນ 100 ຄົນ ຊຶ່ງເປັນການຂະຫຍາຍຕົວທີ່ວ່ອງໄວຫລາຍ.

ໂຄງລ່າງດ້ານສາຍສົ່ງໂທລະຄົມມະນາຄົມແມ່ນໄດ້ຮັບການປັບປຸງດ້ວຍການນຳໃຊ້ສາຍກາບໄຍແສງທີ່ມີຄວາມໄວສູງ ເຊື່ອມຕໍ່ກັບຫວຽດນາມ, ຈີນ, ໄທ, ສິງກະໂປ ແລະ ຜ່ານໄປຍັງປະເທດອື່ນໆ ເຮັດໃຫ້ການສື່ສານດ້ານໂທລະຄົມມະນາຄົມ, ອິນເຕີແນດຢູ່ພາຍໃນ ແລະ ຕ່າງປະເທດ ວ່ອງໄວ ທັນສະໄໝ ແລະ ຕິດຕໍ່ກັບທຸກປະເທດໃນໂລກ. ຕາໜ່າງໂທລະຄົມມະນາຄົມໄດ້ໄປເຖິງ 130 ເມືອງເທົ່າກັບ 94% ຂອງຈຳນວນເມືອງທັງໝົດ ແລະໄປເຖິງ 8 970 ບ້ານເທົ່າກັບ 89% ຂອງຈຳນວນບ້ານທັງໝົດ.

- **ດ້ານເຄຫາ ຜັງເມືອງ ແລະ ນ້ຳປະປາ**

ວຽກງານເຄຫາ ຜັງເມືອງ ແລະ ນ້ຳປະປາໄດ້ຮັບການເອົາໃຈໃສ່ ເຮັດໃຫ້ມີການພັດທະນາຢ່າງຕໍ່ເນື່ອງ.; ມີ 103 ເທດສະບານຂອງເມືອງເທົ່າກັບ 75% ຂອງຈຳນວນເທດສະບານເມືອງທັງໝົດໄດ້ມີແຜນຜັງຊີ້ນຳລວມ. ມີຫລາຍໂຄງການພັດທະນາຕົວເມືອງ ມີບາງໂຄງການໄດ້ສຳເລັດແລ້ວແລະບາງ ໂຄງການກໍກຳລັງຈັດຕັ້ງປະຕິບັດເປັນຕົ້ນ: ໂຄງການພັດທະນາຕົວເມືອງວຽງຈັນໄລຍະ 1 (ສຳເລັດ) ແລະໄລຍະ 2 ກຳລັງຈັດຕັ້ງປະຕິບັດ, ໂຄງການພັດທະນາ ແລະ ໂຄງການຄຸ້ມຄອງຂີ້ເຫຍື້ອຂອງ ຕົວເມືອງອັນດັບສອງ (ຫລວງພະບາງ, ທ່າແຂກ,

ໄກສອນ ພົມວິຫານ ແລະ ປາກເຊ); ໂຄງການສິ່ງແວດລ້ອມນະຄອນຫລວງວຽງຈັນ, ເທດສະບານເມືອງຊຳເໜືອ ແລະ ໂພນສະຫວັນ; ໂຄງການຕົວເມືອງໄລຍະທຳອິດ 12 ຕົວເມືອງ(ຜົ້ງສາລີ,ຊຳເໜືອ,ນ້ຳທາ,ຫ້ວຍຊາຍ,ເມືອງໄຊ, ໄຊຍະບູລີ, ເມືອງແປກ, ວັງວຽງ, ປາກຊັນ, ສາລະວັນ, ລະມາມ ແລະ ສາມັກຄີໄຊ).

ໂຄງການນ້ຳປະປາຕົວເມືອງນ້ອຍ 17ແຫ່ງ ກໍໄດ້ຮັບການຈັດຕັ້ງປະຕິບັດດ້ວຍຜົນສຳເລັດ, ກຳລັງດຳເນີນ ປັບປຸງລະບົບນ້ຳປະປາເກົ່າ 6 ແຫ່ງ ແລະ ກໍ່ສ້າງລະບົບນ້ຳປະປາຕົວເມືອງອີກ 13 ແຫ່ງ ເຮັດໃຫ້ທົ່ວປະເທດມີ ໂຮງງານຜະລິດນ້ຳປະປາທັງໝົດ 53 ແຫ່ງ ເພີ່ມຂຶ້ນ 17 ແຫ່ງຈາກປີ 2000 ເຮັດໃຫ້ 55% ຂອງປະຊາຊົນຕົວ ເມືອງໄດ້ຊົມໃຊ້ນ້ຳປະປາ.

ບັນດາຫົວໜ່ວຍທຸລະກິດອອກແບບ ແລະ ກໍ່ສ້າງ ກໍໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນ ນະພາບ ເຮັດໃຫ້ການກໍ່ສ້າງໃນໄລຍະໄດ້ຮັບຄວາມສະດວກຫລາຍຂຶ້ນ ໂດຍມີສະມາ ຄົມວິສາວະກອນແລະສະຖາ ປານິກເປັນອົງກອນໜຶ່ງໃນການເຕົ້າໂຮມດ້ານວິຊາຊີບ. ການຜະລິດກໍຄືການນຳໃຊ້ວັດສະດຸພາຍໃນກໍໄດ້ຮັບການ ເອົາໃຈໃສ່ຈາກລັດ ແລະ ປະຊາຊົນ. ສະຖາປັດຕະຍະກຳອັນອຸດົມຮັ່ງມີຂອງເຜົ່າຕ່າງໆ ກໍໄດ້ຖືກສົ່ງເສີມ ແລະ ອະນຸລັກໄວ້ເປັນຢ່າງດີ.

- **ດ້ານການຮ່ວມມືກັບຕ່າງປະເທດ**

ກະຊວງ ຄຂປກ ສາມາດຍາດແຍ່ງການຊ່ວຍເຫລືອຈາກການຊ່ວຍເຫລືອລ້າ ແລະ ການກູ້ຢືມຈາກຕ່າງ ປະເທດໃນກອບການຮ່ວມມືສອງຝ່າຍ ຫລື ຫລາຍຝ່າຍ ສະເລັ່ຍແລ້ວໄດ້ 137 ລ້ານໂດລາຕໍ່ປີ. ການຮ່ວມມືກັບ ເພື່ອນມິດຍຸດທະສາດ ສສ ຫວຽດນາມ ແລະ ສປ ຈີນໄດ້ມີບາດກ້າວຂະຫຍາຍຕົວ ໃໝ່ ໂດຍໄດ້ຈັດການຍ້ອງຍໍ ແກ່ລວມໝູ່ ແລະ ບຸກຄົນທີ່ປະກອບສ່ວນດີເດັ່ນໃນການຈັດຕັ້ງປະຕິບັດໂຄງການຮ່ວມມືຂອງສສຫວຽດນາມ (18 ເບ) ແລະ ສປຈີນ (R3, ສວນສາທລະນະປະຕູໄຊ ແລະທາງເລກ 2). ເນື່ອງໃນໂອກາດສະຫລອງ 2 ວັນ ປະຫວັດສາດລາວ-ຫວຽດນາມ ພວກເຮົາໄດ້ຈັດຕັ້ງຖອດຖອນບົດຮຽນລະຫວ່າງພະນັກງານອາວຸໂສລາວກັບ ພະນັກງານອາວຸໂສ ຫວຽດນາມ.

- **ດ້ານການຄຸ້ມຄອງ ແລະ ກໍ່ສ້າງພະນັກງານ**

ພວກເຮົາໄດ້ກໍ່ສ້າງພະນັກງານທາງດ້ານທິດສະດີການເມືອງ, ວິຊາສະເພາະ ແລະ ວິຊາການອື່ນໆທີ່ປົ່ນ ອ້ອມຢ່າງເປັນລະບົບ ແລະ ຕໍ່ເນື່ອງທັງພາຍໃນແລະຕ່າງປະເທດໃຫ້ແກ່ທຸກຂະແໜງ ຂອງກະຊວງ(ຂົວທາງ, ຂົນສົ່ງ, ການບິນ, ເຄຫາ-ຜັງເມືອງແລະອື່ນໆ.....) ເຮັດການຄຸ້ມຄອງລັດ ຄຸ້ມຄອງສັງຄົມໄດ້ມີບາດກ້າວ ຂະຫຍາຍຕົວດ້ວຍຄຸນນະພາບໃໝ່.

ໃນທ້າຍປີ 2007, ກະຊວງ ຍທຂ (ຄຂປກໃນເມື່ອກ່ອນ) ມີພະນັກງານທັງໝົດ 2 334 ຄົນ ໃນນັ້ນ ເປັນ ເພດຍິງ 345 ຄົນ ສັງກັດຢູ່ກົມ, ຫ້ອງການບໍລິຫານ 127ຄົນ, ກອງວິຊາການ ແລະໂຄງ ການ 916 ຄົນ. ຈຳ ນວນລັດຖະກອນທີ່ສັງກັດຢູ່ທ້ອງຖິ່ນມີ 1 590 ຄົນເທົ່າກັບ 68,12%ຂອງລັດຖະ ກອນທັງໝົດ ໃນນັ້ນ ມີເພດຍິງ 201 ຄົນ, ສັງກັດຢູ່ພະແນກ ຍທຂ ແຂວງ 1 026 ແລະຫ້ອງການ ຍທຂ ເມືອງ 564 ຄົນ. ກະຊວງຍທຂ ໄດ້ ເອົາໃຈໃສ່ການຄຸ້ມຄອງພະນັກງານໂດຍຜ່ານການເກັບກຳສະຖິຕິຊັ້ນ, ຂັ້ນເງິນເດືອນ ແລະ ບັນຊີລາຍຊື່ລັດຖະກອນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ